ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

====000====

ແຂວງ ອັດຕະປື

ເລກທີ...118../ຈຂ-ອປ

ອັດຕະປື,ວັນທີ..05 ກຸມພາ 2016

# ຄໍາສັ່ງ

## ຂອງເຈົ້າແຂວງ ວ່າດ້ວຍ

## ການຫ້າມບຸກລຸກຈັບຈອງພື້ນທີ່ແຫຼ່ງທ່ອງທ່ຽວ

## ຕາດຫົວຄົນ ບ້ານໃຫ່ຍໝື່ນຫົວເມືອງ ແລະ ວັດພູສະພອງ ບ້ານສີວິໄລ

- ອີງຕາມ: ກົດໝາຍການທ່ອງທ່ຽວ ໝວດທີ 2,ມາດຕາ 66,67,68,69 ວ່າດ້ວຍການພັດທະນາແຫຼ່ງທ່ອງທ່ຽວ.
- ອີງຕາມ: ການລາຍງານຂອງພະແນກ ຖວທ ແຂວງ ສະບັບເລກທີ 205/ຖວທຂ,ລົງວັນທີ 29/12/2015 ກ່ຽວກັບ ຜົນການສໍາຫຼວດກໍານົດພື້ນທີ່ແຫຼ່ງທ່ອງທ່ຽວ ຕາດຫົວຄົນ ບ້ານໃຫ່ຍໝື່ນຫົວເມືອງ ແລະ ວັດພູສະພອງ ບ້ານ ສີວິໄລ ເມືອງສາມັກຄີໄຊ ແຂວງ ອັດຕະປື.

ເພື່ອເຮັດໃຫ້ການຄຸ້ມຄອງຊັບພະຍາກອນການທ່ອງທ່ຽວທີ່ຂຶ້ນບັນຊີແລ້ວຢູ່ແຂວງອັດຕະປືໄດ້ຄຸ້ມຄອງສອດ ຄ່ອງກັບລະບຽບກົດໝາຍ,ສ້າງເງື່ອນໄຂເພື່ອຮັບປະກັນການພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວ ໄປຕາມແຜນພັດທະນາ ການທ່ອງທ່ຽວໃນອະນາຄົດ.

## ເຈົ້າແຂວງ ອອກຄໍາສັ່ງ:

1./ ຫ້າມນິຕິບຸກຄົນ ຫຼື ບຸກຄົນທີ່ບໍ່ໄດ້ຮັບການອະນຸຍາດ ເຂົ້າໄປຈັບຈ່ອງ,ບຸກຍຶດພື້ນທີ່ແຫຼ່ງທ່ອງທ່ຽວ ຕາດຫົວຄົນ ບ້ານໃຫ່ຍໝື່ນຫົວເມືອງ ເມືອງສາມັກຄີໄຊ ທີ່ພະແນກ ຖວທ ແຂວງສົມທົບກັບພະແນກການທີ່ກ່ຽວຂ້ອງຂອງແຂວງ, ເມືອງ ແລະ ອໍານາດການປົກຄອງບ້ານ ໄດ້ສໍາຫຼວດກໍານົດພື້ນທີ່ ແລະປັກຫຼັກໝາຍ ເນື້ອທີ່ຈໍານວນ 718 ເຮັກຕາ ຢ່າງ ເດັດຂາດ. ເພາະວ່າເຂດດັ່ງກ່າວ ເປັນເຂດສະຫງວນດິນລັດ ເພື່ອຈະພັດທະນາເປັນແຫຼ່ງທ່ອງທ່ຽວໃນອະນາຄົດ.

2./ ຫ້າມນິຕິບຸກຄົນ ຫຼື ບຸກຄົນທີ່ບໍ່ໄດ້ຮັບການອະນຸຍາດ ເຂົ້າໄປຈັບຈ່ອງ,ບຸກຍຶດພື້ນທີ່ແຫຼ່ງທ່ອງທ່ຽວ ບໍລິເວນອ້ອມ ຮອບຕີນພູສະພອງ ບ້ານສີວິໄລ ເມືອງສາມັກຄີໄຊ ທີ່ພະແນກ ຖວທ ແຂວງ ສົມທົບກັບພະແນກການທີ່ກ່ຽວຂ້ອງຂອງ ແຂວງ,ເມືອງ ແລະ ອໍານາດການປົກຄອງບ້ານ ໄດ້ສໍາຫຼວດກໍານົດພື້ນທີ່ ແລະ ປັກຫຼັກໝາຍແລ້ວ ເນື້ອທີ່ຈໍານວນ 61,3

ເຮັກຕາ,ບໍລິເວນອ້ອມຮອບຕີນພູສະພອງ ເຊິ່ງຈະມີການລົງສຳຫຼວດຄືນໃໝ່ ເພາະວ່າເຂດດັ່ງກ່າວ ເປັນເຂດສະຫງວນດິນລັດ ເພື່ອຈະພັດທະນາເປັນແຫຼ່ງທ່ອງທ່ຽວໃນອະນາຄົດ.

3./ ພາກສ່ວນນິຕິບຸກຄົນ ຫຼື ບຸກຄົນໃດ ທີ່ໄດ້ມີການຈັບຈອງເນື້ອທີ່ດິນກ່ອນແລ້ວ ເຊິ່ງນອນໃນເຂດທີ່ລັດໄດ້ສະຫງວນໄວ້ເພື່ອການທ່ອງທ່ຽວຂອງພື້ນທີ່ແຫຼ່ງທ່ອງທ່ຽວ ທັງສອງແຫ່ງດັ່ງກ່າວ ແມ່ນຫ້າມບໍ່ໃຫ້ມີການພັດທະນາຕື່ມອີກຢ່າງເດັດຂາດ ໃຫ້ປະໄວ້ໃນສະພາບເດີມ.

4./ ໃນກໍລະນີມີການລະເມີດໂດຍເຈດຕະນາ ຫຼື ບໍ່ເຈດຕະນາ ຕາມມາດຕາ 84 ຂໍ້ຫ້າມສຳລັບບຸກຄົນ,ນິຕິບຸກຄົນ,ນັກທ່ອງທ່ຽວ ແລະ ການຈັດຕັ້ງອື່ນ ( ກົດໝາຍການທ່ອງທ່ຽວ ) ຈະຖືກດຳເນີນການແກ້ໄຂຕາມລະບຽບກົດໝາຍ.

ຄຳສັ່ງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອັດຕະປື

ເຈົ້າແຂວງແຂວງອັດຕະປື

ດຣ.ນາມ ວິຍະເກດ

ບ່ອນສົ່ງ:

- ຫ້ອງວ່າການປົກຄອງແຂວງ 1 ສະບັບ
- ພະແນກ ຖວທ ແຂວງ 1 ສະບັບ
- ພະແນກ ຊສ ແຂວງ 1 ສະບັບ
- ເຈົ້າເມືອງ 1 ສະບັບ
- ສຳເນົາ 1 ສະບັບ